ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--==໙໙0000໙໙==--

ສຳນັກງານ ນາຍົກລັດຖະມົນຕີ

ເລກທີ 38 /ນຍ

ນະຄອນຫລວງ ວຽງຈັນ, ວັນທີ 21.02.2005

# ດຳລັດ

## ວ່າດ້ວຍ ກອງທຶນ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້

- ອີງຕາມກົດໝາຍ ວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02-03/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມ ມາດຕາ 47 ຂອງ ກົດໝາຍ ປ່າໄມ້ ສະບັບ ເລກທີ 01-96, ລົງວັນທີ 11 ຕຸລາ 1996 ກ່ຽວກັບ ກອງທຶນ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.
- ອີງຕາມ ການສະເໜີ ຂອງລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 0342/ກປ.04, ລົງວັນທີ 22/10/2004.

## ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ ຂອງດຳລັດ**

ດຳລັດສະບັບນີ້ ໄດ້ກຳນົດຫຼັກການ, ລະບຽບການໃນການສ້າງຕັ້ງ, ການຄຸ້ມຄອງບໍລິຫານ ແລະ ກວດກາ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແນໃສ່ລະດົມທຶນ ຈາກຜູ້ດຳເນີນກິດຈະການ ກ່ຽວກັບ ປ່າໄມ້ ເຂົ້າໃນວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ຊັບພະຍາກອນປ່າໄມ້ ເພື່ອປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

ມາດຕາ 2. ນິຍາມ ຄໍາສັບ

1. ກອງທຶນ ພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນກອງທຶນ ທີ່ສ້າງຕັ້ງຂື້ນພາຍໃຕ້ດໍາລັດສະບັບນີ້, ແນໃສ່ ສະສົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອນໍາໃຊ້ເຂົ້າສະເພາະ ແຕ່ວຽກງານ ປ່າໄມ້ຕ່າງໆ ເປັນຕົ້ນ ແມ່ນ ການປົກປັກຮັກສາ ປ່າປ້ອງກັນ ແລະ ປ່າສະຫງວນ, ການປູກ ແລະ ຟື້ນຟູປ່າ ເພື່ອປົກປັກຮັກສາແຫລ່ງນໍ້າ ແລະ ສິ່ງແວດລ້ອມ, ການປົກປັກຮັກສາ ແລະ ຂະຫຍາຍສັດນໍ້າ ແລະ ສັດປ່າ, ການໂຄສະນາອົບຮົມ ນະໂຍບາຍ, ລະບຽບກົດໝາຍ ແລະ ວິຊາການ ກ່ຽວກັບ ປ່າໄມ້ ແລະ ອື່ນໆ ທີ່ມີການພົວພັນ ເຖິງປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້, ຊຶ່ງຕໍ່ໄປນີ້ເອີ້ນວ່າ " ກອງທຶນ ".
2. ກິດຈະການປ່າໄມ້ ແມ່ນທຸກການເຄື່ອນໄຫວ ທີ່ກ່ຽວຂ້ອງກັບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຊຶ່ງປະຕິບັດ ຢູ່ໃນ ຫຼື ນອກເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ: ການສໍາຫຼວດ, ອອກແບບ, ການປູກ, ການຟື້ນຟູ, ການບົວລະບັດຮັກສາ, ການພັດທະນາປ່າໄມ້, ການຂຸດຄົ້ນ, ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນ ປ່າໄມ້, ການປຸງແຕ່ງ, ການປົກປັກຮັກສາ ຊັບພະຍາກອນ ປ່າໄມ້, ການປົກປັກຮັກສາແຫຼ່ງນໍ້າ, ສິ່ງແວດລ້ອມທໍາມະຊາດ ກ່ຽວກັບ ປ່າໄມ້, ການປົກປັກຮັກສາ ແລະ ຂະຫຍາຍພັນພືດ, ພັນໄມ້, ພັນສັດປ່າ ແລະ ສັດນໍ້າ ລວມທັງ ການຢຸດຕິ ການຖາງປ່າເຮັດໄຮ່ ໄປເຮັດ ອາຊີບຄົງທີ່.
3. ຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງທົດແທນ ແມ່ນຄ່າພັນທະ ທີ່ມາຈາກບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງຈ່າຍໃຫ້ລັດກ່ອນ ການຂຸດຄົ້ນ ຕາມ ອັດຕາ ທີ່ລັດວາງອອກ ໂດຍມີ ຈຸດປະສົງນໍາໃຊ້ ສະເພາະ ເຂົ້າໃນ ການສໍາຫຼວດປ່າໄມ້, ການຟື້ນຟູ ບູລະນະປ່າໄມ້, ການປູກໄມ້, ການບົວລະບັດ ຮັກສາ ປ່າປູກ ແລະ ການປົກປັກຮັກສາ ປ່າໄມ້.
4. ຄ່າບູລະນະ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້ ແມ່ນ ຈໍານວນເງິນ ທີ່ບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບອະນຸຍາດ ດໍາເນີນ ກິດຈະການປ່າໄມ້ ຕ້ອງຈ່າຍ ໃຫ້ລັດ ຕາມ ອັດຕາ ທີ່ລັດ ໄດ້ກໍານົດອອກ. ເງິນຈໍານວນນີ້ ໃຫ້ນໍາໃຊ້ ສະເພາະ ເຂົ້າໃນວຽກງານ ການປົກປັກຮັກສາ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້.

ມາດຕາ 3. ເປົ້າໝາຍ ຂອງ ການສ້າງຕັ້ງ ກອງທຶນ

ແມ່ນເພື່ອຮັບປະກັນ ໃຫ້ມີແຫລ່ງທຶນ ທີ່ເໝາະສົມ, ພຽງພໍ, ສະໝໍ່າສະເໝີ ແລະ ໝັ້ນຄົງ ເພື່ອນໍາໃຊ້ ເຂົ້າໃນ ວຽກງານ ຄຸ້ມຄອງ ປົກປັກ ຮັກສາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້ ດໍາເນີນໄປຢ່າງມີປະສິດທິຜົນ ແລະ ການບໍລິຫານວຽກງານຂອງກອງທຶນ ຕາມເປົ້າໝາຍ ທີ່ໄດ້ກໍານົດໄວ້.

## ໝວດທີ II
## ການສ້າງຕັ້ງ ແລະ ຄຸ້ມຄອງ ບໍລິຫານ ກອງທຶນ

**ມາດຕາ 4. ການສ້າງຕັ້ງ ກອງທຶນ**

ລັດຖະບານ ແຫ່ງ ສປປ ລາວ ສ້າງຕັ້ງ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ຂຶ້ນ ເພື່ອປະຕິບັດຕາມຈຸດປະສົງທີ່ກຳນົດໄວ້ ໃນມາດຕາ 47 ຂອງກົດໝາຍປ່າໄມ້

**ມາດຕາ 5. ທີ່ຕັ້ງ ຂອງກອງທຶນ**

ກອງທຶນນີ້ ແມ່ນ ກອງທຶນສະເພາະທີ່ນອນໃນຄວາມຮັບຜິດຊອບ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້ ແຕ່ຕ້ອງມີການປະສານສົມທົບ ກັບກະຊວງ ແລະ ອົງການທີ່ກ່ຽວຂ້ອງ ທາງດ້ານວິຊາການ ໃນການຄຸ້ມຄອງບໍລິຫານ ຂອງກອງທຶນນີ້.

**ມາດຕາ 6. ການຄຸ້ມຄອງ ກອງທຶນ**

ທຸກການເຄື່ອນໄຫວວຽກງານ ຂອງ ກອງທຶນ ຕ້ອງດຳເນີນການ ພາຍໃຕ້ ກົດລະບຽບຂອງກອງທຶນ ແລະ ລະບຽບກົດໝາຍ ທີ່ກ່ຽວຂ້ອງຂອງລັດ.

## ໝວດທີ III
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສະພາ ບໍລິຫານ ແລະ ກອງເລຂາ ກອງທຶນ

**ມາດຕາ 7. ທີ່ຕັ້ງ ແລະ ພາລະບົດບາດ ຂອງ ສະພາ ບໍລິຫານ ກອງທຶນ**

ສະພາ ບໍລິຫານ ກອງທຶນ ແມ່ນອົງການຈັດຕັ້ງໜຶ່ງ ທີ່ບໍ່ປະຈຳການ ຂອງກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງປະກອບດ້ວຍ ສະມາຊິກ ທີ່ຕາງໜ້າ ຈາກ ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຕາມ ທີ່ໄດ້ກຳນົດໄວ້ ໃນ ມາດຕາ 8 ຂອງດຳລັດ ສະບັບນີ້. ສະພາ ບໍລິຫານກອງທຶນ ມີພາລະບົດບາດ ໃນ ການຄຸ້ມຄອງ ບໍລິຫານກອງທຶນ ໃຫ້ສອດຄ່ອງກັບລະບຽບກົດໝາຍຂອງລັດ ທີ່ວາງອອກ, ເຮັດໃຫ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ໃຫ້ເກີດຜົນປະໂຫຍດສູງສຸດ.

**ມາດຕາ 8. ໂຄງປະກອບ ຂອງ ສະພາ ບໍລິຫານ ກອງທຶນ**

1. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ
2. ທ່ານ ຫົວໜ້າ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງປະທານ

3. ທ່ານ ຫົວໜ້າ ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ທັງເປັນຫົວໜ້າ ກອງເລຂາ ກອງທຶນ — ເປັນຮອງປະທານ
4. ທ່ານ ຫົວໜ້າ ກົມຊັບສິນ, ກະຊວງການເງິນ — ເປັນສະມາຊິກ
5. ທ່ານ ຫົວໜ້າ ກົມແຜນການ, ກະຊວງກະສິກຳ ແລະ ປ່າໄມ້ — ເປັນສະມາຊິກ
6. ທ່ານ ຫົວໜ້າ ກົມວາງແຜນການ ແລະ ພັດທະນາທີ່ດິນ ສຳນັກງານນາຍົກລັດຖະມົນຕີ — ເປັນສະມາຊິກ
7. ທ່ານ ຫົວໜ້າ ກົມສິ່ງແວດລ້ອມ, ອົງການວິທະຍາສາດ-ເຕັກໂນໂລຊີ ແລະ ສິ່ງແວດລ້ອມ — ເປັນສະມາຊິກ

ມາດຕາ 9. ການແຕ່ງຕັ້ງ ສະມາຊິກ ສະພາ ບໍລິຫານ ກອງທຶນ

ການແຕ່ງຕັ້ງ ສະມາຊິກ ສະພາ ບໍລິຫານ ກອງທຶນຈະມີຜົນສັກສິດໄດ້ ກໍ່ຕໍ່ເມື່ອ ໄດ້ຮັບການແຕ່ງຕັ້ງ ຢ່າງເປັນທາງການ ຈາກ ທ່ານ ນາຍົກລັດຖະມົນຕີ ໂດຍການສະເໜີ ຂອງລັດຖະມົນຕີ ວ່າການ ກະຊວງ ຫຼື ປະທານ ອົງການທຽບເທົ່າ ທີ່ກ່ຽວຂ້ອງ.

ມາດຕາ 10. ສິດ ແລະ ໜ້າທີ່ ຂອງ ສະພາ ບໍລິຫານ ກອງທຶນ

1. ຮັບຮອງ ເອົາກົດລະບຽບ ພາຍໃນ, ແຜນການເຄື່ອນໄຫວ ແລະ ແຜນອະນຸມັດ ການນຳໃຊ້ ກອງທຶນ;
2. ແຕ່ງຕັ້ງ ພະນັກງານຊ່ວຍວຽກ ໃນກອງເລຂາກອງທຶນ; ຊີ້ນຳ, ຕິດຕາມ, ກວດກາ ແລະ ຕີລາຄາ ການປະຕິບັດ ວຽກງານ ຂອງກອງເລຂາກອງທຶນ;
3. ລະດົມທຶນ ຈາກ ພາຍໃນ ແລະ ຕ່າງປະເທດ ແລະ ດຳເນີນການ ໂຄສະນາ ເພື່ອແຈ້ງສະພາບ ກ່ຽວກັບ ຄວາມຕ້ອງການ ຂອງ ວຽກງານ ການພັດທະນາ ປ່າໄມ້ ແລະ ຊັບພະຍາກອນ ປ່າໄມ້ ແລະ ບົດບາດ ຄວາມຮັບຜິດຊອບ ຂອງກອງທຶນ;
4. ຮຽກປະຊຸມ ສະໄໝ ສາມັນ ແລະ ວິສາມັນ ຂອງ ສະພາ ບໍລິຫານ ກອງທຶນ;
5. ຕິດຕາມ ກວດກາ ແລະ ປະເມີນຜົນ ການນຳໃຊ້ ກອງທຶນ;
6. ປະຕິບັດ ຕາມກົດລະບຽບ ພາຍໃນ ກ່ຽວກັບ ການເຄື່ອນໄຫວ ຂອງ ສະພາບໍລິຫານ ກອງທຶນ;
7. ຮັບຜິດຊອບຕໍ່ຜົນສຳເລັດ ແລະຂໍ້ຂາດຕົກບົກຜ່ອງ ໃນການຄຸ້ມຄອງບໍລິຫານກອງທຶນ
8. ລາຍງານ ກ່ຽວກັບ ການເຄື່ອນໄຫວ ວຽກງານຂອງຕົນ ຕໍ່ນາຍົກລັດຖະມົນຕີ ເປັນປະຈຳ ແຕ່ລະໄລຍະ.

ມາດຕາ 11. ສິດ ແລະ ໜ້າທີ່ ຂອງ ກອງເລຂາ ກອງທຶນ

1. ເປັນເສນາທິການ ໃຫ້ແກ່ ສະພາ ບໍລິຫານ ກອງທຶນ;

2. ຄຸ້ມຄອງ ລະບົບບັນຊີ ຂອງ ກອງທຶນ;
3. ສັງລວມ ແລະ ສະເໜີ ແຜນການ ນຳໃຊ້ກອງທຶນ ຕໍ່ສະພາບໍລິຫານກອງທຶນ ເພື່ອ ພິຈາລະນາ ແລະ ຮັບຮອງ;
4. ປະສານງານແລະຈັດຕັ້ງປະຕິບັດໜ້າທີ່ ຕາມການຊີ້ນຳຂອງສະພາບໍລິຫານ ກອງທຶນ
5. ສ້າງກົດລະບຽບ ພາຍໃນ ກ່ຽວກັບ ການເຄື່ອນໄຫວ ຂອງ ສະພາ ບໍລິຫານ ກອງທຶນ ແລະ ລະບຽບການ ຄຸ້ມຄອງ ແລະ ນຳໃຊ້ ກອງທຶນ;
6. ສະຫລຸບ ລາຍງານ ການເຄື່ອນໄຫວວຽກງານ ຂອງກອງທຶນ ໃນແຕ່ລະໄລຍະ;
7. ສຶກສາ, ຄົ້ນຄວ້າ ວິທີການ ແລະ ມາດຕາການ ໃນ ການລະດົມທຶນ ຈາກ ພາຍໃນ ແລະ ຕ່າງປະເທດ;
8. ໂຄສະນາ ເຜີຍແຜ່ ກ່ຽວກັບ ຄວາມໝາຍສຳຄັນຂອງກອງທຶນ ຕໍ່ວຽກງານ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ບົດບາດ ຄວາມຮັບຜິດຊອບຂອງກອງທຶນ;
9. ຕິດຕາມ ກວດກາ ແລະ ປະເມີນຜົນ ການນຳໃຊ້ ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບ ການອະນຸມັດ.

## ໝວດທີ IV
## ແຫລ່ງລາຍຮັບ ຂອງກອງທຶນ

ມາດຕາ 12. ແຫລ່ງລາຍຮັບ ຂອງ ກອງທຶນ

1. ຄ່າບູລະນະປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
2. ຄ່າພັນທະ ປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ ;
3. ຄ່າສຳຫລວດປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
4. ການປະກອບສ່ວນ ໃນການດຳເນີນ ທຸລະກິດໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ຂອງ ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ;
5. ການປະກອບສ່ວນ ຂອງລັດ, ບຸກຄົນ, ນິຕິບຸກຄົນ, ລວມໝູ່, ອົງການຈັດຕັ້ງ ສັງຄົມ ພາຍໃນ ແລະ ຕ່າງປະເທດ, ອົງການ ຈັດຕັ້ງ ສາກົນ ລວມທັງ ສະຖາບັນ ການເງິນ ສາກົນ ແລະ ອື່ນໆ;
6. ລາຍຮັບອື່ນໆ ລວມທັງ ດອກເບັ້ຍ ຫລື ເງິນປັນຜົນ ຈາກການລົງທຶນ ຫລື ຖືຫຸ້ນ;
7. ລາຍຮັບ ຈາກສ່ວນແບ່ງປັນຜົນກຳໄລ ຈາກການຂາຍໄມ້ ໃນ ປ່າຜະລິດ ຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 59/ນຍ, ລົງວັນທີ 22/05/2002 ວ່າດ້ວຍ ການຄຸ້ມຄອງ ປ່າຜະລິດ ແບບຍືນນານ.

ມາດຕາ 13. ບັນຊີເງິນຝາກ ຂອງກອງທຶນ

ລາຍຮັບ ຂອງກອງທຶນ ຕ້ອງຮັກສາໄວ້ໃນ ບັນຊີເງິນຝາກ ຂອງກອງທຶນ ທີ່ທະນາຄານແຫ່ງ ສປປ ລາວ ຫລື ທະນາຄານທຸລະກິດ ທີ່ຖືກມອບສິດ ໂດຍພາຍໃຕ້ ການກວດກາຂອງກະຊວງການເງິນ ຕາມລະບຽບຄຸ້ມຄອງ ລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ.

ມາດຕາ 14. ເປົ້າໝາຍ ການນຳໃຊ້ເງິນ ຂອງກອງທຶນ

1. ການປົກປັກຮັກສາ ປ່າປ້ອງກັນ ແລະ ປ່າສະຫງວນ;
2. ການປູກ ແລະ ຟື້ນຟູປ່າ ເພື່ອປົກປັກຮັກສາ ແຫລ່ງນ້ຳ ແລະ ສິ່ງແວດລ້ອມ;
3. ການປົກປັກຮັກສາ ແລະ ຂະຫຍາຍ ພັນພືດ, ສັດນ້ຳ ແລະ ສັດປ່າ ເພື່ອຮັບປະກັນໃຫ້ນັບມື້ ນັບເພີ້ມຂຶ້ນ;
4. ການສຳຫລວດ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
5. ການປົກປັກ ຮັກສາປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແບບຍືນນານ;
6. ການຄົ້ນຄວ້າທົດລອງ ແລະ ສິ່ງເສີມປ່າໄມ້;
7. ການໂຄສະນາເຜີຍແຜ່ກົດໝາຍ, ລະບຽບການ ແລະ ຫລັກວິຊາການກ່ຽວກັບປ່າໄມ້;
8. ວຽກງານຄຸ້ມຄອງ ບໍລິຫານ ກອງທຶນ;
9. ການປະຕິບັດ ນະໂຍບາຍ ຕໍ່ຜູ້ທີ່ມີຄຸນງາມ ຄວາມດີ ໃນວຽກງານ ຄຸ້ມຄອງປົກປັກຮັກສາ ແລະ ຟື້ນຟູບູລະນະ ປ່າໄມ້.

## ໝວດທີ V

## ການກວດກາ ກອງທຶນ ແລະ ການລາຍງານ

ມາດຕາ 15. ການກວດສອບ ລະບົບບັນຊີ

ລະບົບບັນຊີ ຂອງກອງທຶນ ຕ້ອງໄດ້ຮັບ ການກວດສອບ ຕາມລະບຽບການ ກ່ຽວກັບການກວດສອບ ບັນຊີຂອງລັດ ຊຶ່ງດຳເນີນການໂດຍ ອົງການກວດສອບ ບັນຊີແຫ່ງລັດ ແລະ ການກວດສອບລະບົບບັນຊີ ຂອງກອງທຶນ ປະກອບມີ 2 ປະເພດ ຄື: ການກວດກາປົກກະຕິ ແລະ ການກວດກາ ສະເພາະກິດ.

ມາດຕາ 16. ການກວດກາ ປົກກະຕິ

ເພື່ອເຮັດໃຫ້ ການນຳໃຊ້ ກອງທຶນ ໄປຕາມເປົ້າໝາຍ, ຕາມແຜນດຳເນີນງານ ແລະ ຖືກຕ້ອງ ຕາມລະບຽບກົດໝາຍ, ສະພາບໍລິຫານກອງທຶນ ຕ້ອງດຳເນີນ ການກວດກາປົກກະຕິ ແລະ ມີກຳນົດເວລາ ອັນແນ່ນອນ.

ມາດຕາ 17. ການກວດກາ ສະເພາະກິດ

ໃນກໍລະນີຈໍາເປັນ ລັດຖະບານ ຈະດໍາເນີນ ການກວດກາ ຕໍ່ ການເຄື່ອນໄຫວ ຮອບດ້ານ ຂອງກອງທຶນ ໄດ້ທຸກເວລາ.

ມາດຕາ 18. ການລາຍງານ

ສະພາບໍລິຫານກອງທຶນ ຕ້ອງຕອບສະໜອງ ບົດລາຍງານ ກ່ຽວກັບ ຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດ ວຽກງານຂອງຕົນ ແລະ ບົດລາຍງານ ຂອງ ອົງການ ກວດສອບ ບັນຊີ ໃຫ້ແກ່ ຜູ້ປະກອບທຶນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຊາບ ໃນ ເວລາ ທີ່ພາກສ່ວນ ດັ່ງກ່າວ ຫາກມີ ການຮ້ອງຂໍມາ.

## ໝວດທີ VI

## ບົດບັນຍັດ ສຸດທ້າຍ

ມາດຕາ 19. ການຈັດຕັ້ງປະຕິບັດ

1. ມອບໃຫ້ກະຊວງ ກະສິກໍາ ແລະ ປ່າໄມ້ ຜັນຂະຫຍາຍ ເປັນກົດລະບຽບ ຂອງກອງທຶນ ແນໃສ່ ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ ໃຫ້ປາກົດຜົນເປັນຈິງ;
2. ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີໜ້າທີ່ ຈັດຕັ້ງປະຕິບັດ ດໍາລັດສະບັບນີ້ ຢ່າງເຂັ້ມງວດ;
3. ສະພາບໍລິຫານກອງທຶນ ມີກາປະທັບ ເປັນຂອງຕົນເອງ ເພື່ອນໍາໃຊ້ ເຂົ້າໃນວຽກງານ ຕາມພາລະບົດບາດ ຂອງຕົນ.

ມາດຕາ 20. ຜົນສັກສິດ

ດໍາລັດສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ ນັບແຕ່ມື້ ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ